HIỆP ĐỊNH TẠO ĐIỀU KIỆN THUẬN LỢI CHO PHƯƠNG TIỆN CƠ GIỚI ĐƯỜNG BỘ QUA LẠI BIÊN GIỚI

GIỮA

CHÍNH PHỦ NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM

VÀ

CHÍNH PHỦ NƯỚC CỘNG HOÀ DÂN CHỦ NHÂN DÂN LÀO

Chính phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào (sau đây gọi tắt là hai Bên);

Nhằm củng cố và tăng cường mối quan hệ hữu nghị truyền thống, đoàn kết đặc biệt và hợp tác toàn diện giữa hai nước;

Nhằm tạo điều kiện thuận lợi cho việc phát triển vận tải hàng hoá và hành khách qua lại giữa hai nước bằng phương tiện cơ giới đường bộ;

đã thoả thuận như sau :

Điều 1: Quy định chung

1. Phương tiện cơ giới đường bộ của hai Bên qua lại biên giới phải được tiến hành qua các cặp cửa khẩu quốc tế và cửa khẩu chính đã được hai Bên thống nhất. Các cặp cửa khẩu quốc tế và cửa khẩu chính sẽ được quy định chi tiết tại Nghị định thư thực hiện "Hiệp định Tạo điều kiện thuận lợi cho phương tiện cơ giới đường bộ qua lại biên giới giữa Chính Phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào" (gọi tắt là Nghị định thư). Việc qua lại của người và phương tiện qua các cặp cửa khẩu phụ do hai tỉnh có chung biên giới thoả thuận.

2. Hai Bên có quyền và cơ hội ngang nhau trong vận chuyển hàng hoá và hành khách song phương giữa hai Bên.

3. Những vấn đề liên quan đến vận tải đường bộ giữa hai nước như: tổ chức vận tải hành khách và hàng hoá, tạo điều kiện thuận lợi trong việc làm thủ tục qua lại cửa khẩu biên giới giữa hai nước, công tác kiểm tra, xử lý các vi phạm trong hoạt động vận tải qua lại biên giới và các vấn đề có liên quan khác sẽ do cơ quan Nhà nước có thẩm quyền của hai Bên chủ trì phối hợp với các cơ quan có liên quan thoả thuận thực hiện.

Điều 2. Thuật ngữ

Trong Hiệp định này, các thuật ngữ dưới đây được hiểu như sau:

1. "Cơ quan Nhà nước có thẩm quyền":

a. Phía Cộng hoà xã hội chủ nghĩa Việt Nam là Bộ Giao thông vận tải và Cơ quan được Bộ Giao thông vận tải uỷ quyền.

b. Phía Cộng hoà dân chủ nhân dân Lào là Bộ Công chính và Vận tải và Cơ quan được Bộ Công chính và Vận tải uỷ quyền.

2. "Phương tiện cơ giới đường bộ" gọi tắt là phương tiện, gồm ô tô, ô tô đầu kéo, rơmoóc, sơmi rơmoóc được kéo theo ô tô và các phương tiện chuyên dùng lưu thông trên đường bộ.

Phương tiện bao gồm cả phương tiện thương mại và phi thương mại.

a. "Phương tiện thương mại" là phương tiện tham gia vào vận chuyển hành khách và hàng hoá có thu tiền hoặc phương tiện chuyên chở người hoặc hàng hoá phục vụ hoạt động kinh doanh của doanh nghiệp.

b. "Phương tiện phi thương mại" là phương tiện của các cơ quan, tổ chức, cá nhân hoạt động không vì mục đích kinh doanh như: xe của các cơ quan, tổ chức đi công tác, xe cứu thương, xe cứu hoả, xe cứu hộ, xe thực hiện sứ mệnh nhân đạo (gọi chung là xe công vụ) và xe của cá nhân đi việc riêng.

Điều 3. Giấy phép và cấp giấy phép

1. Cơ quan nhà nước có thẩm quyền của mỗi Bên cấp Giấy phép vận tải Việt - Lào (hoặc Lào - Việt) cho mỗi phương tiện của Bên đó khi qua lại giữa hai nước theo mẫu Giấy phép thống nhất do hai Bên thoả thuận.

2. Mẫu Giấy phép vận tải Việt - Lào (hoặc Lào -Việt) và các nội dung có liên quan được quy định chi tiết trong Nghị định thư thực hiện Hiệp định.

Điều 4. Tuân thủ luật pháp quốc gia

1. Phương tiện khi hoạt động trên lãnh thổ của Bên kia phải tuân thủ pháp luật và quy định về giao thông vận tải đường bộ của Bên đó.

2. Trường hợp đặc biệt, khi vào lãnh thổ của Bên kia, phương tiện có trọng tải hoặc kích thước vượt quá quy định hạn chế của Bên đó hoặc khi

vận chuyển hàng nguy hiểm thì chủ phương tiện phải xin cơ quan có thẩm quyền cấp giấy phép đặc biệt như đối với phương tiện của Bên đó.

Điều 5. Quy định đối với phương tiện

1. Phương tiện qua lại biên giới giữa hai nước được mang biển số do nước mình cấp, ký hiệu phân biệt quốc gia, giấy phép vận tải Việt - Lào (hoặc Lào - Việt) do cơ quan có thẩm quyền cấp kèm theo các giấy tờ có liên quan khác được quy định chi tiết tại Nghị định thư thực hiện Hiệp định.

2. Các giấy tờ chứng nhận về đăng ký sở hữu, giấy chứng nhận kiểm định an toàn kỹ thuật và bảo vệ môi trường của phương tiện phải được mang theo phương tiện khi hoạt động trên lãnh thổ của Bên kia để xuất trình cho Nhà chức trách khi có yêu cầu.

Điều 6. Cấm vận chuyển

Phương tiện của Bên này không được vận chuyển hàng hoá và hành khách giữa hai điểm trong lãnh thổ của Bên kia.

Điều 7. Danh sách hành khách và vận đơn

1. Việc vận chuyển hành khách nêu trong Hiệp định này phải áp dụng mẫu danh sách hành khách thống nhất của nước mình.

2. Việc vận chuyển hàng hoá nêu trong Hiệp định này phải áp dụng vận đơn thống nhất của nước mình, có tham khảo mẫu vận đơn thông dụng quốc tế mà hai Bên đã thống nhất.

3. Các quy định về vận tải hàng hoá qua lại giữa hai nước và hàng hoá quá cảnh thực hiện theo những quy định trong Hiệp định về hợp tác kinh tế thương mại và Hiệp định quá cảnh hàng hoá mà hai Bên là thành viên hoặc quy định luật pháp quốc gia của Bên đó.

Điều 8. Yêu cầu đối với lái xe và nhân viên phục vụ

1. Lái xe và nhân viên phục vụ trên phương tiện khi hoạt động trên lãnh thổ của Bên kia phải tuân thủ pháp luật và quy định về giao thông vận tải đường bộ của Bên đó.

2. Lái xe hoạt động trên lãnh thổ của Bên kia phải có Bằng lái xe (hoặc Giấy phép lái xe) quốc gia hoặc quốc tế phù hợp với loại phương tiện mà mình đang điều khiển.

3. Lái xe, nhân viên phục vụ trên phương tiện vận tải đường bộ phải có Hộ chiếu hoặc giấy tờ có giá trị ngang Hộ chiếu do nước mình cấp. Hộ chiếu của lái xe, nhân viên phục vụ và giấy chứng nhận đăng ký sở hữu phương tiện mà lái xe điều khiển phải do cùng một Bên cấp. Trường hợp lái xe mang hộ chiếu của một Bên điều khiển phương tiện đăng ký tại Bên kia sẽ được quy định cụ thể tại Nghị định thư.

4. Bằng lái xe (hoặc Giấy phép lái xe) và các loại giấy tờ khác được quy định trong Hiệp định này phải luôn mang theo và xuất trình khi Nhà chức trách yêu cầu.

Điều 9. Nghị định thư thực hiện Hiệp định

1. Nghị định thư thực hiện Hiệp định quy định những vấn đề cụ thể liên quan đến phương tiện, tạm nhập và tái xuất hoặc tạm xuất và tái nhập, việc vận chuyển người và hàng hoá qua lại biên giới, chế độ trách nhiệm của người vận tải, cấp phép vận tải Việt – Lào hoặc Lào - Việt, thủ tục kiểm tra, kiểm soát biên phòng, hải quan, kiểm dịch y tế, động, thực vật, các khoản thu và các quy định khác có liên quan tới hoạt động vận tải qua lại biên giới.

2. Nghị định thư là một phần không thể tách rời của Hiệp định.

Điều 10. Miễn thuế nhập khẩu

Trong quá trình thực hiện vận chuyển, các loại hàng hoá sau được miễn thuế nhập khẩu khi mang vào lãnh thổ của Bên kia:

1. Nhiên liệu cung cấp cho động cơ của phương tiện chứa trong thùng chứa được lắp đặt theo thiết kế kỹ thuật và chỉ số dung lượng trong thùng chứa.

2. Dầu bôi trơn cần thiết để bổ sung cho động cơ trong quá trình vận chuyển.

3. Các phụ tùng chưa sử dụng hoặc phụ tùng hư hỏng được tháo ra từ phương tiện phải đưa về nước.

Điều 11. Bảo hiểm và Trợ giúp cần thiết

1. Chủ phương tiện khi hoạt động trên lãnh thổ của Bên kia phải có bảo hiểm trách nhiệm dân sự của chủ xe cơ giới đối với người thứ ba và các loại bảo hiểm khác theo quy định của Bên đó.

2. Trường hợp phương tiện của một Bên gặp tai nạn hoặc nguy hiểm trên lãnh thổ của Bên kia thì Nhà chức trách của Bên đó phải cung cấp trợ giúp cần thiết cho lái xe, hành khách, hàng hoá của Bên bị nạn theo pháp luật và quy định liên quan của Bên đó, đồng thời thông báo cho Cơ quan nhà nước có thẩm quyền phía Bên kia trong thời gian sớm nhất.

Điều 12. Các Thủ tục tại cửa khẩu

Việc thực hiện các thủ tục về biên phòng, hải quan, kiểm dịch, y tế, động thực vật được tiến hành nhanh chóng phù hợp với các Hiệp định song phương hoặc điều ước quốc tế đa phương mà hai Bên cùng là thành viên và pháp luật quốc gia của Bên đó.

Điều 13. Ưu tiên làm thủ tục tại cửa khẩu

Phương tiện chở người bệnh nặng, người già yếu, tàn tật, động vật và hàng tươi sống, hàng đông lạnh và hàng hóa mau hỏng được ưu tiên theo thứ tự trên khi làm thủ tục biên phòng, hải quan, kiểm dịch y tế, động thực vật.

Điều 14. Thành lập Nhóm công tác tạo thuận lợi

Nhằm đảm bảo thực hiện Hiệp định, mỗi Bên sẽ thành lập Nhóm công tác tạo thuận lợi vận tải để giải quyết các vấn đề phát sinh trong quá trình thực hiện Hiệp định. Hoạt động của Nhóm công tác tạo thuận lợi vận tải của hai Bên được quy định tại Nghị định thư.

Điều 15. Giải quyết tranh chấp

Hai Bên giải quyết những bất đồng hoặc tranh chấp có thể phát sinh trong quá trình giải thích hoặc thực hiện Hiệp định này thông qua thương lượng.

Điều 16. Quan hệ với các điều ước quốc tế khác

Các điều khoản của Hiệp định này không ảnh hưởng đến quyền lợi và nghĩa vụ của mỗi Bên theo quy định của các điều ước quốc tế mà Bên đó là thành viên.

Điều 17. Loại trừ áp dụng đối với phương tiện của nước thứ ba

Hiệp định này không áp dụng đối với phương tiện đăng ký tại nước thứ ba thực hiện vận tải quá cảnh, mượn đường hoặc tham gia vận chuyển hàng hoá, hành khách của một Bên này vào lãnh thổ của Bên kia.

Điều 18. Hiệu lực của Hiệp định

1. Hiệp định này có hiệu lực 03 năm kể từ ngày hai Bên trao đổi công hàm ngoại giao thông báo đã hoàn thành thủ tục phê duyệt theo quy định của luật pháp quốc gia. Hiệp định này thay thế Hiệp định Vận tải đường bộ giữa Chính phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào ký ngày 24 tháng 2 năm 1996 và Nghị định thư sửa đổi, bổ sung Hiệp định ký ngày 18 tháng 7 năm 2001.

2. Hiệu lực của Hiệp định được mặc nhiên kéo dài thêm mỗi kỳ là 03 năm, nếu 06 tháng trước khi hết hiệu lực không một Bên nào thông báo bằng văn bản cho Bên kia qua đường ngoại giao đề nghị chấm dứt hiệu lực của Hiệp định.

3. Hiệp định sẽ hết hiệu lực nếu một trong hai Bên thông báo bằng văn bản cho Bên kia qua đường ngoại giao đề nghị chấm dứt và Hiệp định sẽ hết hiệu lực sau 06 tháng kể từ ngày Bên kia nhận được văn bản.

Điều 19. Sửa đổi, bổ sung Hiệp định

Hiệp định này có thể được sửa đổi, bổ sung theo thoả thuận bằng văn bản của hai Bên. Các điều khoản sửa đổi, bổ sung sẽ có hiệu lực kể từ ngày trao đổi văn bản thoả thuận.

Những người có tên dưới đây được Chính phủ hai Bên uỷ quyền đã ký Hiệp định này.

Hiệp định này được làm tại Hà Nội ngày 23 tháng 4 năm 2009 thành hai bản chính, mỗi bản bằng tiếng Việt và tiếng Lào. Các văn bản bằng tiếng Việt và tiếng Lào đều có giá trị pháp lý như nhau.

THAY MẶT CHÍNH PHỦ NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM	**THAY MẶT CHÍNH PHỦ NƯỚC CỘNG HOÀ DÂN CHỦ NHÂN DÂN LÀO**
Hồ Nghĩa Dũng	**Sommad Pholsena**
Bộ trưởng Bộ Giao thông vận tải	**Bộ trưởng Bộ Công chính và Vận tải**

ສັນຍາ

ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ຍານພາຫະນະຂົນສົ່ງທາງບົກທີ່ຜ່ານແດນ ລະຫ່ວາງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຕໍ່ໄປເອີ້ນວ່າ(ສອງຝ່າຍ).

ເພື່ອເປັນການເພີ່ມທະວີສາຍພົວພັນທີ່ເປັນມູນເຊື້ອ,ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງຝ່າຍ,

ເພື່ອແໃສ່ສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍຕົວທາງດ້ານການຂົນສົ່ງສິນຄ້າ ແລະໂດຍສານ ທີ່ຜ່ານດ່ານຊາຍແດນ ທາງບົກ ລະຫ່ວາງສອງຝ່າຍ.

ໄດ້ ຕົກ ລົງ ຮ່ວມ ກັນ ດັ່ງ ນີ້ :

ມາດຕາ1: ຫລັກການລວມ.

1. ຍານພາຫານະຂົນສົ່ງທາງບົກຂອງສອງຝ່າຍ ທີ່ຜ່ານໄປມາຕ້ອງໄດ້ຜ່ານບັນດາ ຄູ່ດ່ານຊາຍແດນ ສາກົນ – ແລະດ່ານທ້ອງຖິ່ນທີ່ສອງຝ່າຍໄດ້ເປັນເອກະພາບກັນ.ບັນດາດ່ານສາກົນແລະທ້ອງຖິ່ນຈະໄດ້ກຳນົດລະ ອຽດຢູ່ໃນອະນຸສັນຍາ ວ່າດ້ວຍ ການປະຕິບັດສັນຍາ " ເພື່ອອຳນວຍຄວາມສະດວກໃຫ້ແກ່ ຍານພາຫາ ນະຂົນສົ່ງທາງບົກຜ່ານແດນ ລະຫວ່າງລັດຖະບານ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ລັດຖະບານແຫ່ງ ສາທາລະນະລັດສັງຄົມນິຍົມຫວຽດນາມ (ຕໍ່ໄປເອີ້ນວ່າອະນຸສັນຍາ). ການຜ່ານ - ໄປມາຂອງຄົນ ແລະຍານພາຫະນະຂົນສົ່ງຕາມດ່ານປະເພນີ ລະຫວ່າງສອງແຂວງທີ່ມີຊາຍແດນຕິດກັນ ນັ້ນ ໃຫ້ສອງແຂວງເປັນຜູ້ຕົກລົງ ນຳກັນ .
2. ສອງຝ່າຍມີສິດ ແລະມີກາລະໂອກາດ ເທົ່າທຽມກັນ ໃນການຂົນສົ່ງ ສິນຄ້າ ແລະ ໂດຍສານ ລະຫ່ວາງ ສອງຝ່າຍ.
1. ບັນຫາອື່ນໆ ທີ່ພົວພັນກັບການຂົນສົ່ງທາງບົກ ລະຫວ່າງສອງຝ່າຍ ຄື: ການຈັດຕັ້ງ ການຂົນສົ່ງໂດຍສານ ແລະສິນຄ້າ, ການອຳນວຍຄວາມສະດວກໃນການດຳເນີນຂັ້ນຕອນແຈ້ງເອກະສານຜ່ານດ່ານຊາຍແດນ ລະຫວ່າງສອງປະເທດ, ການຕິດຕາມກວດກາ,ການແກ້ໄຂຜູ້ລະເມີດ ການຂົນສົ່ງຜ່ານແດນ ແລະບັນຫາ ທີ່ກ່ຽວ ຂ້ອງອື່ນໆນັ້ນ ອົງການລັດທີ່ມີອຳນາດຂອງສອງຝ່າຍຈະໄດ້ສົມທົບກັບບັນດາອົງການທີ່ກ່ຽວຂ້ອງ ຕົກລົງ.

ມາດຕາ 2: ຄວາມຫມາຍຂອງຄຳສັບ.

ບັນດາຄຳສັບໃນສັນຍາສະບັບນີ້ ມີຄວາມຫມາຍດັ່ງຕໍ່ໄປນີ້:

1. ອົງການລັດທີ່ມີສິດອຳນາດ.

ກ. ຝ່າຍສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນກະຊວງໂຍທາທິການ ແລະ ຂົນສົ່ງ ແລະອົງ ການທີ່ກະຊວງໂຍທິການ ແລະ ຂົນສົ່ງ ມອບສິດ

ຂ. ຝ່າຍສາທາລະນະລັດສັງຄົມນິຍົມຫວຽດນາມ ແມ່ນກະຊວງຄົມມະນາຄົມຂົນສົ່ງ ແລະ ອົງການທະ ຊວງຄົມມະນາຄົມຂົນສົ່ງມອບສິດ .

2. ຍານພາຫະນະຂົນສົ່ງທາງບົກ"ແມ່ນລົດໂອໂຕ,ລົດພວງ,ທາງລາກ ແລະລົດຂົນສົ່ງສະເພາະທີ່ແລ່ນໄປ ມາຕາມ ເສັ້ນທາງ ລວມທັງ ຍານພາຫະນະທີ່ສັນຈອນຢູ່ທາງບົກ.

ຍານພາຫະນະລວມມີ ຍານພາຫະນະທີ່ເຮັດທຸລະກິດ ແລະ ບໍ່ເຮັດທຸລະກິດ.

ກ. ຍານພາຫະນະທີ່ເຮັດທຸລະກິດຂົນສົ່ງ: ແມ່ນຍານພາຫະນະທີ່ດຳເນີນການຂົນສົ່ງຄົນ ແລະ ສິນຄ້າ ໂດຍມີ ການເກັບຄ່າຂົນສົ່ງ ຫຼື ຍານພາຫະນະຂົນສົ່ງຄົນ ຫລື ສິນຄ້າ ທີ່ຮັບໃຊ້ການເຄື່ອນໄຫວທຸລະກິດ ຂອງວິສະ ຫະກິດ.

ຂ. ຍານພາຫະນະທີ່ບໍ່ເຮັດທຸລະກິດການຂົນສົ່ງ: ແມ່ນຍານພາຫະນະຂອງບັນດາສຳນັກງານອົງການການຈັດ ຕັ້ງ,ລົດສ່ວນຕົວທີ່ເຄື່ອນໄຫວບໍ່ໄດ້ເຮັດທຸລະກິດການຂົນສົ່ງເຊັ່ນ: ລົດຂອງບັນດາສຳນັກງານອົງການ,ການ ຈັດຕັ້ງໄປເຮັດວຽກ, ລົດໂຮງໝໍ, ລົດດັບເພີງ, ລົດຊ່ວຍເຫລືອ, ລົດທີ່ປະຕິບັດວຽກມະນຸດສະທຳ(ເວັ້ນລວມ ແມ່ນ ລົດ ທາງ ການ) ແລະ ລົດສ່ວນຕົວທີ່ໄປວຽກສະເພາະ.

ມາດຕາ 3: ໃບອະນຸຍາດ ແລະ ການອອກອະນຸຍາດ.

1. ອົງການລັດທີ່ມີສິດອຳນາດ ຂອງແຕ່ລະຝ່າຍ ເປັນຜູ້ອອກໃບອະນຸຍາດການຂົນສົ່ງ ລາວ-ຫວຽດນາມ ຫຼື ຫວຽດນາມ-ລາວໃຫ້ແກ່ຍານພາຫະນະຂອງຕົນເພື່ອຂົນສົ່ງຜ່ານແດນລະຫວ່າງສອງຝ່າຍຕາມແບບຟອມ_ ໃບອະນຸຍາດ ເປັນເອກະພາບ ຊຶ່ງສອງຝ່າຍຈະໄດ້ຕົກລົງນຳກັນ.
2. ແບບຟອມໃບອະນຸຍາດ ການຂົນສົ່ງ ລາວ-ຫວຽດນາມ ຫຼື ຫວຽດນາມ-ລາວ ພ້ອມບັນດາເນື້ອໃນ ທີ່ກ່ຽວ ຂ້ອງຈະໄດ້ກຳນົດລະອຽດໃນອະນຸສັນຍາຈັດຕັ້ງປະຕິບັດສັນຍາສະບັບນີ້.

ມາດຕາ 4: ການປະຕິບັດລະບຽບກົດໝາຍ.

1. ຍານພາຫານະຂົນສົ່ງໃນເວລາດຳເນີນການຂົນສົ່ງສິນຄ້າຫລືໂດຍສານບິນດິນແດນຂອງຝ່າຍໃດໜຶ່ງ ຕ້ອງ ຮັບປະກັນ ໃຫ້ຖືກຕ້ອງຕາມກົດໝາຍແລະຂໍ້ກຳນົດການຄົມມະນາຄົມຂົນສົ່ງທາງບົກ ຂອງຝ່າຍນັ້ນ.
2. ໃນກໍລະນີ ພິເສດ ຖ້າຂະໜາດ ຫຼື ນ້ຳໜັກຂອງຍານພາຫະນະ ຂົນສົ່ງທາງບົກ ລວມທັງສິນຄ້າ ຫາກເກີນ ຂອບເຂດຂອງຝ່າຍໃດໜຶ່ງທີ່ໄດ້ກຳນົດໄວ້ແລະການຂົນສົ່ງວັດຖຸອັນຕະລາຍນັ້ນ, ຜູ້ຂົນສົ່ງຕອ້ງໄດ້ຂໍອະນຸ ຍາດຈາກ ອົງການຄຸ້ມຄອງທີ່ມີສິດອຳນາດ ອອກໃບອະນຸຍາດຂົນສົ່ງພິເສດ..

ມາດຕາ 5: ກຳນົດ ກ່ຽວກັບ ຍານພາຫານະ.

1. ຍານພາຫະນະຂົນສົ່ງທີ່ຜ່ານແດນລະຫວ່າງສອງຝ່າຍ ຕ້ອງໄດ້ຕິດປ້າຍທະບຽນລົດ ແລະ ຕິດກາໝາຍ ບົ່ງບອກ ປະເທດຕົນພ້ອມທັງມີໃບ ອະນຸຍາດ ຂົນສົ່ງ ຜ່ານແດນ ລາວ - ຫວຽດນາມຫຼືຫວຽດນາມ - ລາວ ອອກໃຫ້ໂດຍອົງການທີ່ມີສິດອຳນາດຂອງແຕ່ລະປະເທດແລະ ເອກະສານທີ່ກ່ຽວຂ້ອງອື່ນໆ,ບັນຫານີ້ຈະ ໄດ້ກຳນົດລະອຽດໃນອະ ນຸສັນຍາ ຈັດຕັ້ງປະຕິບັດສັນຍາສະບັບນີ້.
2. ບັນດາເອກະສານທີ່ຢັ້ງຢືນກຳມະສິດ,ໃບຢັ້ງຢືນກວດກາເຕັກນິກແລະສິ່ງ ແວດລ້ອມຂອງຍານພາຫະນະ ຕ້ອງໄດ້ຕິດຕາມໄປນຳລົດໃນເວລາໄປເຄື່ອນໄຫວຢູ່ໃນດິນແດນສອງຝ່າຍເພື່ອແຈ້ງເຈົ້າໜ້າທີ່ເມື່ອ ຕ້ອງການ ກວດກາ.

ມາດຕາ 6: ຂໍ້ຫ້າມໃນການຂົນສົ່ງ.

ຍານພາຫະນະຂົນສົ່ງຂອງຝ່າຍໜຶ່ງບໍ່ມີສິດເຮັດການຂົນສົ່ງສິນຄ້າແລະໂດຍສານລະຫ່ວ່າງສອງຈຸດ ໃນດິນແດນ ຂອງອີກຝ່າຍໜຶ່ງ .

ມາດຕາ 7: ບັນຊີລາຍຊື່ຜູ້ໂດຍສານ ແລະ ໃບນຳສົ່ງສິນຄ້າ.

1. ການຂົນສົ່ງໂດຍສານທີ່ລະບຸຢູ່ໃນສັນຍາສະບັບນີ້ຕ້ອງໄດ້ນຳໃຊ້ແບບຟອມບັນຊີລາຍຊື່ຜູ້ໂດຍສານຄືກັນ ກັບແບບຟອມທີ່ນຳໃຊ້ ຢູ່ພາຍໃນປະເທດຕົນ .
2. ການຂົນສົ່ງສິນຄ້າ ທີ່ລະບຸຢູ່ໃນສັນຍາສະບັບນີ້ ຕ້ອງໄດ້ນຳໃຊ້ ໃບນຳສົ່ງສິນຄ້າແບບດຽວກັນກັບ ທີ່ນຳໃຊ້ ຢູ່ພາຍໃນປະເທດຕົນ ແລະມີການພິຈາລະ ນາຕາມແບບ ຟອມໃບນຳສົ່ງທົ່ວໄປ ຂອງສາກົນຊຶ່ງສອງຝ່າຍ ໄດ້ເອກະພາບກັນ
3. ບັນດາຂໍ້ກຳນົດການຂົນສົ່ງສິນຄ້າທີ່ຜ່ານໄປມາລະຫວ່າງສອງຝ່າຍແລະສິນຄ້າຜ່ານແດນໃຫ້ປະຕິບັດຕາມ ບັນດາຂໍ້ກຳນົດໃນສັນຍາກ່ຽວກັບການຮ່ວມມື ດ້ານເສດຖະກິດການຄ້າ ແລະ ສັນຍາ ການຂົນສົ່ງສິນຄ້າ ຜ່ານແດນ ຊຶ່ງສອງຝ່າຍໄດ້ລົງນາມນຳກັນ ຫລື ຕາມຂໍ້ກຳນົດ ຂອງແຕ່ລະປະເທດ.

ມາດຕາ 8: ພັນທະ,ໜ້າທີ່ ຂອງຜູ້ຂັບຂີ່ ແລະ ຜູ້ບໍລິການປະຈຳລົດ.

1. ຜູ້ຂັບຂີ່ລົດ ແລະ ພະນັກງານປະຈຳລົດເມື່ອດຳເນີນການຂົນສົ່ງສິນຄ້າ ແລະ ໂດຍສານຢູ່ໃນດິນແດນຂອງ ຝ່າຍໜຶ່ງຕ້ອງປະຕິບັດຕາມ ຂໍ້ກຳນົດ, ກົດໝາຍ ການຂົນສົ່ງທາງບົກ ຂອງຝ່າຍນັ້ນ.
2. ຜູ້ຂັບຂີ່ລົດຂົນສົ່ງສິນຄ້າ ແລະໂດຍສານທີ່ຜ່ານໄປມາ ລະຫວ່າງສອງຝ່າຍຕ້ອງມີໃບຂັບຂີ່ພາຍໃນ ຫຼືໃບຂັບ ຂີ່ສາກົນ ຂອງປະເທດຕົນ ທີ່ສອດຄ່ອງກັບປະເພດລົດ ທີ່ຕົນກຳລັງຂັບຂີ່ຢູ່.
3. ຜູ້ຂັບຂີ່ລົດ,ພະນັກງານປະຈຳລົດ ຕ້ອງມີໜັງສືຜ່ານແດນ ຫຼື ເອກະສານທີ່ມີຄຸນຄ່າເທົ່າທຽມກັບໜັງສື ຜ່ານ ແດນທີ່ອອກໃຫ້ໂດຍປະເທດຕົນ, ໜັງສືຜ່ານແດນຂອງຜູ້ຂັບຂີ່ລົດ,ພະນັກງານບໍລິການປະຈຳລົດ ແລະ ໃບ ຢັ້ງຢືນກຳມະສິດ ຂອງຍານພາຫະນະ ຊຶ່ງຜູ້ຂັບຂີ່ ກຳລັງນຳໃຊ້ຢູ່ນັ້ນ ແມ່ນປະເທດດຽວກັນ ເປັນຜູ້ອອກໃຫ້, ໃນກໍລະນີຜູ້ຂັບຂີ່ຖື ໜັງສືຜ່ານແດນ ຂອງຝ່າຍໜຶ່ງ ແຕ່ຂັບລົດຂອງອີກຝ່າຍໜຶ່ງຈະໄດ້ກຳນົດລະອຽດ ຢູ່ໃນ ອະນຸສັນຍາ.
4. ໃບຂັບຂີ່ ແລະ ບັນດາເອກະສານອື່ນໆ ທີ່ໄດ້ກຳນົດໃນສັນຍາສະບັບນີ້ ຕ້ອງຕິດຕາມໄປນຳລົດ ຢູ່ສະເໝີ ແລະ ສະແດງຕໍ່ເຈົ້າໜ້າທີ່ເມື່ອຖືກກວດກາ .

ມາດຕາ 9: ອະນຸສັນຍາ ເພື່ອປະຕິບັດສັນຍາ.

1. ອານຸສັນຍາຈະກຳນົດເນື້ອໃນລະອຽດທີ່ພົວພັນເຖິງຍານພາຫະນະ ນຳເຂົ້າຊົ່ວຄາວ ແລະ ນຳອອກຄືນ ຫຼື ນຳອອກ ຊົ່ວຄາວ ແລະ ນຳເຂົ້າຄືນ, ການຂົນສົ່ງໂດຍສານ ແລະ ສິນຄ້າຜ່ານແດນທີ່ຜ່ານ ໄປມາລະຫວ່າງ ສອງຝ່າຍ,ການອອກໃບອະນຸຍາດຂົນສົ່ງລະຫວ່າງລາວ-ຫວຽດນາມຫຼື ຫວຽດນາມ-ລາວ,ການກວດກາ ຄົນ ເຂົ້າເມືອງ,ການແຈ້ງພາສີ, ການກວດກາປ້ອງກັນພືດແລະສັດ, ອະນາໄມກັນພະຍາດ, ການເກັບຄ່ທຳນຽມ ຕ່າງໆ ແລະ ບັນຫາອື່ນໆ ທີ່ພົວພັນ ເຖິງການຂົນສົ່ງຜ່ານແດນ .

2. ອະນຸສັນຍາແມ່ນພາກສ່ວນນຶ່ງຂອງສັນຍາຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້.

ມາດຕາ 10: ການຍົກເວັ້ນພາສີຂາເຂົ້າ.

ໃນໄລຍະປະຕິບັດການຂົນສົ່ງ ຕາມສັນຍາສະບັບນີ້, ບັນດາສິນຄ້າດັ່ງລຸ່ມນີ້ ຈະຖືກຍົກເວັ້ນພາສີ ຂາເຂົ້າ ໃນເມື່ອນຳເຂົ້າດິນແດນ ຂອງອີກຝ່າຍນຶ່ງ:

1. ນ້ຳມັນເຊື້ອໄຟເຊິ່ງຢູ່ໃນຖັງທີ່ຕິດມາກັບລົດແຕ່ລະປະເພດ ແລະ ທີ່ຖືກກັບລະບົບລໍ່ລ້ຽງເຄື່ອງຈັກຕາມການ ອອກແບບຂອງລົດ .
2. ນ້ຳມັນລໍ່ລື່ນ ໃນຈຳນວນທີ່ຈຳເປັນ ສຳລັບເຕີມໃນການຂົນສົ່ງຖ້ຽວນັ້ນ.
3. ເຄື່ອງອາໄຫ່ລົດ ແລະ ເຄື່ອງມື ທີ່ຈຳເປັນ ສຳລັບການສ້ອມແປງລົດ.

- ສຳລັບເຄື່ອງອາໄຫ່ລົດທີ່ບໍ່ທັນໄດ້ໃຊ້ຫຼືເຄື່ອງອາໄຫ່ເປ່ເພທີ່ມ້າງອອກຈາກຍານພາຫານະຂົນສົ່ງ ຕ້ອງເອົາ ກັບຄືນປະເທດຕົນ.

ມາດຕາ 11: ການປະກັນໄພ ແລະການຊ່ວຍເຫຼືອສຸກເສີນ.

1.ຍານພາຫະນະທີ່ເຮັດການຂົນສົ່ງໂດຍສານ,ສິນຄ້າແລະເຄື່ອງຂອງຜ່ານແດນລະຫວ່າງສອງຝ່າຍຕາມເງື່ອນ ໄຂຂອງສັນຍາສະບັບນີ້ ຕ້ອງມີປະກັນໄພຕໍ່ບຸກຄົນທີ່ສາມແລະບັນດາປະກັນໄພອື່ນໆຕາມຂໍ້ຂອງຝ່າຍໜຶ່ງ.

2. ໃນກໍລະນີຍານພາຫະຂົນສົ່ງ ຂອງຝ່າຍໜຶ່ງເກີດອຸປະຕິເຫດຫຼື ຖືກອັນຕະລາຍຢູ່ດິນແດນຂອງອີກຝ່າຍໜຶ່ງ ແມ່ນເຈົ້າໜ້າທີ່ຝ່າຍນັ້ນ ຕ້ອງໃຫ້ຄວາມຊ່ວຍເຫຼືອ ອັນຈຳເປັນໃຫ້ແກ່ຜູ້ຂັບລົດ,ຜູ້ໂດຍສານ,ສິນຄ້າ ທີ່ມານຳ
ລົດແລະດຳເນີນການແກ້ໄຂ ຕາມກົດໝາຍ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງຂອງຝ່າຍນັ້ນ,ພ້ອມກັນນັ້ນຕ້ອງແຈ້ງ ໃຫ້ອົງການກ່ຽວຂ້ອງ ຂອງລັດທີ່ມີສິດອຳນາດ ຂອງອີກຝ່າຍໜຶ່ງຊາບ.

ມາດຕາ 12: ການແຈ້ງເອກະສານ ຢູ່ດ່ານຊາຍແດນ.

ການແຈ້ງເອກະສານ ຢູ່ດ່ານຊາຍແດນ ການກວດກາຄົນເຂົ້າເມືອງ, ການກວດກາພາສີ, ການກວດກາ ສຸກຂະອະນາໄມພືດ,ສັດ ແລະ ພະຍາດ ຈະຕ້ອງໄດ້ປະຕິບັດໃຫ້ວ່ອງໄວ ແລະ ຖືກຕ້ອງຕາມຂໍ້ຕົກລົງ ສາກົນ ເຊິ່ງສອງຝ່າຍ ໄດ້ເປັນສະມາຊິກ ຫຼື ຕາມສັນຍາ ລະບຽບຊາຍແດນ ລະຫວ່າງ ສອງປະເທດ ແລະ ບັນຫາໃດທີ່ຂໍ້ຕົກລົງ ຫຼື ສັນຍາຂ້າງເທິງນັ້ນ ບໍ່ໄດ້ກວມເອົາ ແມ່ນໃຫ້ປະຕິບັດ ຕາມລະບຽບກົດໝາຍ ຂອງ ແຕ່ລະປະເທດ.

ມາດຕາ 13: ບູລິມະສິດໃນການແຈ້ງເອກະສານ ຢູ່ດ່ານຊາຍແດນ.

ຍານພາຫະນະຂົນສົ່ງຄົນເຈັບໜັກ, ຜູ້ເຖົ້າແກ່, ຄົນພິການ, ເດັກນ້ອຍ, ສັດແລະສິນຄ້າແຊ່ເຢັນ ຈະໄດ້ ຮັບບູລິມະສິດຕາມລຳດັບໃນການແຈ້ງເອກະສານຜ່ານດ່ານພາສີ, ການກວດກາຄົນເຂົ້າເມືອງ, ກວດກາ ປ້ອງກັນ ພືດ ແລະ ສັດຢູ່ດ່ານຊາຍແດນ .

ມາດຕາ 14: ກົນໄກປະສານງານ.

ເພື່ອຮັບປະກັນການປະຕິບັດສັນຍາສະບັບນີ້,ແຕ່ລະຝ່າຍຈະສ້າງຕັ້ງໜ່ວຍງານຂອງຕົນເພື່ອສ້າງເງື່ອນໄຂສະດວກໃນການຂົນສົ່ງ, ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນ ໃນໄລຍະປະຕິບັດສັນຍາສະບັບນີ້, ການເຄື່ອນໄຫວຂອງ ໜ່ວຍງານ ຈະໄດ້ກຳນົດໃນອະນຸສັນຍາ.

ມາດຕາ 15: ການແກ້ໄຂຂໍ້ຂັດແຍ່ງ.

ສອງຝ່າຍ ຈະແກ້ໄຂທຸກໆບັນຫາທີ່ບໍ່ເປັນເອກະພາບກັນຊຶ່ງອາດຈະເກີດຂຶ້ນ ໃນເວລາຕີຄວາມໝາຍ ຫຼື ການປະຕິບັດສັນຍາ ສະບັບນີ້ ໂດຍຜ່ານການເຈລະຈາ ແລະ ປຶກສາຫາລືກັນ.

ມາດຕາ 16: ການພົວພັນເຖິງບັນຫາຂໍ້ກຳນົດລະບຽບການ.

ທຸກໆມາດຕາ ຂອງສັນຍາສະບັບນີ້ ບໍ່ມີຜົນສະທ້ອນເຖິງສິດຜົນປະໂຫຍດ ແລະ ພັນທະຂອງແຕ່ລະຝ່າຍ ຕາມຂໍ້ ກຳນົດ ຂອງຫຼັກການສາກົນ ທີ່ຕົນເປັນສະມາຊິກ.

ມາດຕາ 17 : ບໍ່ນຳໃຊ້ກັບຍານພາຫະນະປະເທດທີ່ສາມ..

ສັນຍາສະບັບນີ້ ບໍ່ສາມາດນຳໃຊ້ກັບ ຍານພາຫະນະຂົນສົ່ງ ທີ່ຂຶ້ນທະບຽນ ຢູ່ປະເທດທີສາມ ຊຶ່ງເຂົ້າຮ່ວມ ການຂົນສົ່ງ ຜ່ານແດນ,ຂໍນຳໃຊ້ ເສັ້ນທາງຜ່ານ ຫຼື ເຂົ້າຮ່ວມ ການຂົນສົ່ງ ສິນຄ້າ,ໂດຍສານໃຫ້ ຝ່າຍໜຶ່ງເພື່ອ ເຂົ້າໄປຍັງດິນແດນຂອງອີກຝ່າຍໜຶ່ງ .

ມາດຕາ 18 : ຜົນສັກສິດຂອງສັນຍາ.

1. ສັນຍາສະບັບນີ້ມີຜົນນຳໃຊ້ໄດ້ສາມປີນັບແຕ່ມື້ທີ່ໄດ້ຮັບຈົດໝາຍແຈ້ງສະບັບສຸດທ້າຍກ່ຽວກັບ ການສຳເລັດ ຂັ້ນຕອນພາຍໃນສຳລັບການມີຜົນສັກສິດຂອງສັນຍາສະບັບນີ້,ສັນຍາສະບັບນີ້ປ່ຽນແທນສັນຍາຂົນສົ່ງທາງ ບົກ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ທີ່ໄດ້ ລົງນາມ ເມື່ອ ວັນທີ 24 ກຸມພາ 1996 ແລະ ອະນຸສັນຍາວ່າດ້ວຍການດັດແປງ,ເພີ່ມເຕີມສັນຍາທີ່ໄດ້ເຊັນຮ່ວມກັນໃນ ວັນທີ 18 ກໍລະກົດ 2001.
2. ຜົນບັງຄັບໃຊ້ຂອງ ສັນຍາສະບັບນີ້ ຈະຖືກແກ່ຍາວຕໍ່ໂດຍອັດຕະໂນມັດໆຈົດລະ3 ປີຖ້າຫາກວ່າພາຍໃນ 6 ເດືອນກ່ອນ ທີ່ຜົນບັງຄັບໃຊ້ ຂອງສັນຍາສະບັບນີ້ ຈະໝົດອາຍຸລົງ ຫາກບໍ່ມີ ຄູ່ສັນຍາອີກຝ່າຍໜຶ່ງແຈ້ງການ ເປັນລາຍລັກອັກສອນໄປຫາອີກ ຝ່າຍໜຶ່ງໂດຍຜ່ານກະຊວງການ ຕ່າງປະເທດເພື່ອຍົ້ນເຈດຈຳນົງ ຢຸດຕິຜົນ ບັງຄັບໃຊ້ ຂອງສັນ ສັນຍາສະບັບນີ້ .
3. ສັນຍາສະບັບນີ້ ຈະສິ້ນສຸດຜົນສັກສິດ ໃນເມື່ອຝ່າຍໃດໜຶ່ງ ແຈ້ງເປັນລາຍລັກອັກສອນສະເໜີຂໍຢຸດຕິ ຜົນ ບັງຄັບໃຊ້ໃຫ້ອີກຝ່າຍໜຶ່ງຊາບໂດຍຜ່ານທາງການທູດ ແລະສັນຍາກໍ່ຈະສິ້ນສຸດຄວາມສັກສິດພາຍຫຼັງ 6 ເດືອນ ນັບແຕ່ ຝ່າຍນັ້ນໄດ້ຮັບແຈ້ງການ.

ມາດຕາ 19: ການດັດແປງ ແລະ ເພີ່ມເຕີມສັນຍາ.

ສັນຍາສະບັບນີ້ອາດມີການດັດແປງ,ເພີ່ມເຕີມຕາມການຕົກລົງເປັນລາຍລັກສອນຂອງສອງຝ່າຍ,ບັນດາ ມາດຕາ ທີ່ດັດແປງ ແລະເພີ່ມເຕີມ ຈະມີຜົນສັກສິດ ນັບແຕ່ມື້ແລກປ່ຽນຈົດໝາຍຕົກລົງ .

ບຸກຄົນທີ່ມີຊື່ດັ່ງລຸ່ມນີ້ ທີ່ໄດ້ຮັບການມອບສິດ ຈາກລັດຖະບານຂອງສອງຝ່າຍ ໄດ້ເຊັນສັນຍາສະບັບນີ້.

ສັນຍາສະບັບນີ້ເຮັດທີ່ນະຄອນຫລວງຮ່າໂນ້ຍໃນວັນທີ 23 ເດືອນເມສາ 2009, ເປັນສອງສະບັບຕົ້ນ ເປັນສອງພາສາ,1ສະບັບພາສາລາວ,1ສະບັບພາສາຫວຽດນາມ,ທັ້ງສອງພາສາລ້ວນແຕ່ມີຄຸນຄ່າທາງດ້ານນິຕິກໍໝາຍເທົ່າທຽມກັນ .

ຕາງໜ້າລັດຖະບານ	ຕາງໜ້າລັດຖະບານ
ສາທາລະນະລັດປະຊາທິປະໄຕປະຊາຊົນລາວ	ສາທາລະນະລັດສັງຄົມນິຍົມຫວຽດນາມ
ສົມມາດ ພິລເສນາ	ໂຮ ເໜ້ຍ ຍຸ໋ງ
ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ	ລັດຖະມົນຕີວ່າການ ກະຊວງຄົມມະນາຄົມຂົນສົ່ງ